ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1082

ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ

ເລກທີ: 1082 /ກສ

ນະຄອນຫຼວງວຽງຈັນ, ວັນທີ: 13 MAR 2026

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸມັດ ແຜນການຂຸດຄົ້ນ ແລະ ສົ່ງອອກ ໄມ້ເກດສະໜາ (ໄມ້ສວນປູກ) ປະຈຳປີ 2026

- ອີງຕາມ ກົດໝາຍ ວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍ ການຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ສະບັບເລກທີ 299/ລບ, ລົງວັນທີ 05 ມິຖຸນາ 2024,
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 1284/ກປມ, ລົງວັນທີ 25 ກຸມພາ 2026;

## ລັດຖະມົນຕີ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:

**ມາດຕາ 1** ເຫັນດີອະນຸມັດ ແຜນການຂຸດຄົ້ນ ແລະ ສົ່ງອອກ ໄມ້ເກດສະໜາ (ໄມ້ສວນປູກ) ປະຈຳປີ 2026 ດັ່ງນີ້:

1. ປະເພດ ນ້ຳມັນ ຈຳນວນ : 590 ລິດ/ກິໂລກຼາມ (ຫ້າຮ້ອຍເກົ້າສິບ ລິດ/ກິໂລກຼາມ);
2. ປະເພດ ທ່ອນ ຈຳນວນ : 1,750,000 ກິໂລກຼາມ (ໜຶ່ງລ້ານເຈັດແສນຫ້າສິບພັນ ກິໂລກຼາມ);
3. ປະເພດ ສິ້ນສ່ວນ ຈຳນວນ : 2,692,900 ກິໂລກຼາມ (ສອງລ້ານຫົກແສນເກົ້າສິບສອງພັນເກົ້າຮ້ອຍ ກິໂລກຼາມ);
4. ປະເພດ ເສດໄມ້ ຈຳນວນ : 1,220,200 ກິໂລກຼາມ (ໜຶ່ງລ້ານສອງແສນຊາວພັນສອງຮ້ອຍ ກິໂລກຼາມ);
5. ປະເພດ ທູບ ຈຳນວນ : 200 ກິໂລກຼາມ (ສອງຮ້ອຍ ກິໂລກຼາມ);
6. ປະເພດ ຜົງໄມ້ ຫຼື ຝຸ່ນ ຈຳນວນ : 1,212,500 ກິໂລກຼາມ (ໜຶ່ງລ້ານສອງແສນສິບສອງພັນຫ້າຮ້ອຍ ກິໂລກຼາມ);
7. ປະເພດ ຕ່ອນໄມ້ (ທີ່ເປັນກ້ອນ) ຈຳນວນ : 202,000 ກິໂລກຼາມ (ສອງແສນສອງພັນ ກິໂລກຼາມ);
8. ປະເພດ ນ້ຳມັນດຳ ຫຼື ສານສະກັດ : 100,000 ລິດ/ກິໂລກຼາມ (ໜຶ່ງແສນ ລິດ/ກິໂລກຼາມ);
9. ປະເພດ ສະບູ ຈຳນວນ : 2,000 ກິໂລກຼາມ (ສອງພັນ ກິໂລກຼາມ);
10. ປະເພດ ທຽນ ຈຳນວນ : 200 ກິໂລກຼາມ (ສອງຮ້ອຍ ກິໂລກຼາມ);
11. ປະເພດ ໝອນ ຈຳນວນ : 5,000 ກິໂລກຼາມ (ຫ້າພັນ ກິໂລກຼາມ);
12. ປະເພດ ຖົງແຊ່ຕີນ : 3,000 ກິໂລກຼາມ (ສາມພັນ ກິໂລກຼາມ);
13. ປະເພດ ຕົວຢ່າງ ຈຳນວນ : 5 ກິໂລກຼາມ (ຫ້າ ກິໂລກຼາມ);

**ມາດຕາ 2** ມອບໃຫ້ ກົມປ່າໄມ້, ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງ/ນະຄອນຫຼວງ ເປັນເຈົ້າ ການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄຸ້ມ

ຄອງ ແລະ ກວດກາ ການຂຸດຄົ້ນ, ການເຄື່ອນຍ້າຍ ແລະ ການສົ່ງອອກຜະລິດຕະພັນ ໄມ້ເກດສະໜາ ຈຳນວນດັ່ງກ່າວ ຢ່າງເຂັ້ມງວດ ແລະ ໃຫ້ສອດຄ່ອງຕາມກົດໝາຍ ລະບຽບການ, ສົນທິສັນຍາສາກົນ ວ່າດ້ວຍ ການຄ້າຂາຍສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ທີ່ ສປປ ລາວ ເປັນພາຄີ, ຫຼີກລ່ຽງບໍ່ໃຫ້ມີການສວຍໃຊ້ໂອກາດ ຂຸດຄົ້ນໄມ້ເກດສະໜາຈາກທຳມະຊາດ ຫຼື ຂຸດຄົ້ນໄມ້ຈາກບ່ອນອື່ນ ທີ່ບໍ່ໄດ້ຮັບອະນຸຍາດ ຢ່າງເດັດຂາດ.

**ມາດຕາ 3** ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ການນຳກະຊວງ ຮັບຊາບ ເປັນແຕ່ລະໄລຍະ

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຮທ. ລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້ ... ລັດຖະມົນຕີ

ກົມແກ້ວ ສິງນາວົງ

ບ່ອນນຳສົ່ງ:

1. ທ່ານ ລມຕ, ຮລມຕ ທ່ານລະ 01 ສະບັບ;
2. ຫ້ອງການ ກະຊວງ ກສ 01 ສະບັບ;
3. ກົມປ່າໄມ້ 01 ສະບັບ;
4. ພະແນກ ກສ ແຂວງ/ນະຄອນຫຼວງ 01 ສະບັບ;
5. ເກັບຮັກສາໄວ້ 01 ສະບັບ.